ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ


ສະຖານເອກອັກຄະລັດຖະທູດ
ແຫ່ງ ສປປ ລາວ
ທີ່ ແບກແລັງ

Embassy of the Lao PDR
Bismarckallee 2A, 14193 Berlin
Tel: 030/89060647; Fax: 030/89060648


# ລະບຽບການຂໍປະສັນຊາດລາວ

ພົນລະເມືອງລາວ ທີ່ອາໃສຢູ່ຕ່າງປະເທດ ( ຫມາຍເຖິງຜູ່ທີ່ມີສັນຊາດລາວ, ຖືຫນັງສືຜ່ານແດນ ສປປ ລາວ, ມີອະນຸຍາດເດີນທາງມາຕ່າງປະເທດ ແລະ ຂຶ້ນທະບຽນກົງສຸນ ຢູພາຍໃຕ້ການຄຸ້ມຄອງ ຂອງ ສະຖານທູດ ) ຖ້າຫາກມີເຈດຕະນາ ຢາກປະສັນຊາດລາວ ດ້ວຍສາເຫດອັນຈຳເປັນ ຈະຕ້ອງປະກອບເອກະສານຍື່ນຜ່ານ ສະຖານທູດ ຫລື ສະຖານກົງສຸນລາວ ຢູ່ຕ່າງປະເທດ ໄປຍັງພາກສ່ວນກ່ຽວຂ້ອງຢູ່ ສປປ ລາວ. ພາຍຫລັງ ໄດ້ຮັບອະນຸຍາດແລ້ວ ສະຖານທູດ ຫລື ສະຖານກົງສຸນຈິ່ງອອກຫນັງສືຢັ້ງຢືນໃຫ້ໄດ້.

ເອກະສານທີ່ຈະຕ້ອງປະກອບມີດັ່ງນີ້:

1. ຄຳຮ້ອງຂໍປະສັນຊາດລາວຂຽນດ້ວຍຕົວເອງ ( ບໍ່ມີຮ່າງ ) ..........1 ສະບັບ
2. ບັດປະຈຳຕົວ ຫລື ຫນັງສືຜ່ານແດນ ສປປ ລາວ..........1 ສະບັບ
3. ຊີວະປະຫວັດ..........1 ສະບັບ
4. ຫນັງສືການເກີດຂອງຜູ້ຮ້ອງຂໍ..........1 ສະບັບ
5. ຫນັງສືແຕ່ງດອງ ( ຖ້າຈົດທະບຽນແຕ່ງດອງແລ້ວ ) ..........1 ສະບັບ
6. ຫນັງສືການເກີດຂອງ ຜົວ/ເມຍ ແລະ ລູກທີ່ອາຍຸບໍ່ເຖິງກະສຽນ 18 ປີ ຜູ້ລະ..........1 ສະບັບ
7. ໃບຢັ້ງຢືນທີ່ຢູ່..........1 ສະບັບ
8. ໃບຢັ້ງຢືນ ຈາກສານກ່ຽວກັບຄະດີຕ່າງໆ ( ໃບແຈ້ງໂທດ ) ..........1 ສະບັບ
9. ໃບຢັ້ງຢືນການປະຕິບັດພັນທະ ຂອງ ຕົນຕໍ່ປະເທດຊາດ,ເຊັ່ນ: ພັນທະປ້ອງກັນຊາດ, ພັນທະເສຍພາສີ, ອາກອນ..........1 ສະບັບ
10. ຮູບຂະຫນາດ 3x4 ບໍ່ກາຍ 6 ເດືອນ..........3 ແຜ່ນ
11. ຄ່າທຳນຽມ..........20 ຢູໂຣ

<u>ຫມາຍເຫດ</u>: ເພື່ອຄວາມສະດວກແກ່ເຈົ້າຫນ້າທີ່ ກໍ່ຄື ເພື່ອບໍ່ເປັນການເສຍເວລາ, ເອກະສານໃດທີ່ເປັນພາສາຕ່າງປະເທດ ຂໍໃຫ້ແປເປັນພາສາລາວ ໂດຍໃຫ້ມີການຢັ້ງຢືນຈາກທະນາຍຄວາມເສຍກ່ອນ ແລ້ວຈິ່ງສົ່ງໄປຍັງສະຖານທູດ.

ແບກແລັງ, ວັນທີ 29.11.2011